washington healthplanfinder

click. compare. covered.

# ຄູ່ມືການປະກັນສຸຂະພາບສຳລັບຜູ້ອົບພະຍົບໃນລັດວໍຊິງຕັນ



# ຍິນດີຕ້ອນຮັບ

ຄົນຈາກທົ່ວໂລກເອີ້ນ ລັດວໍຊິງຕັນ ວ່າເປັນເຮືອນ. ສໍາລັບຄົນທີ່ຫາກໍມາຢູ່ສະຫະລັດເປັນຄັ້ງທໍາອິດ, ການເຂົ້າໃຈການປະກັນສຸຂະພາບສາມາດເປັນປະສົບການທີ່ສັບສົນ ແລະ ໜັກໜ່ວງ.

ທຸກຄົນທີ່ອາໄສໃນລັດວໍຊິງຕັນສາມາດເຂົ້າເຖິງການປະກັນສຸຂະພາບຜ່ານ Washington Healthplanfinder™, ບໍ່ວ່າຈະມີສະຖານະການເຂົ້າເມືອງແນວໃດກໍຕາມ. ຄູ່ມືນີ້ຈະຊ່ວຍໃຫ້ທ່ານເຂົ້າໃຈຕົວເລືອກຂອງທ່ານ.

ຮັບການຄຸ້ມຄອງກັນເລີຍ ລັດວໍຊິງຕັນ!

# ສາລະບານ


| | |
|---|---|
| **5** | ຄໍາສັບການດູແລສຸຂະພາບ |
| **7** | ການປະກັນສຸຂະພາບແມ່ນຫຍັງ? |
| **8** | ຕົວເລືອກການດູແລສຸຂະພາບສໍາລັບຜູ້ອົບພະຍົບ |
| **10** | ຂ້າພະເຈົ້າມີສິດບໍ? |
| **14** | ຂ້າພະເຈົ້າມີຕົວເລືອກຫຍັງແດ່? |
| **16** | ການບໍລິການດູແລສຸຂະພາບທີ່ບໍ່ເສຍຄ່າ ຫຼື ລາຄາຕໍ່າ |
| **17** | ບ່ອນສະໝັກຂໍ |
| **18** | ກ່ຽວກັບ Exchange |


ອັບເດດຄັ້ງຫຼ້າສຸດ ຕຸລາ 2024.
Reference number: LA-203-4529466_Oct2024_Laotian

# ຄຳສັບການດູແລສຸຂະພາບ

### ການດູແລສຸຂະພາບ

ການບໍລິການເພື່ອປ້ອງກັນ ຫຼື ປິ່ນປົວອາການທາງການແພດ.

### ແຜນສຸຂະພາບ

ທ່ານຊື້ແຜນສຸຂະພາບໃນແຕ່ລະປີ ໃນກໍລະນີທີ່ທ່ານ ຫຼື ຄອບຄົວຂອງທ່ານຕ້ອງການການດູແລສຸຂະພາບ. ບໍລິສັດແຜນສຸຂະພາບຂອງທ່ານຈະຈ່າຍຄ່າດູແລສຸຂະພາບບາງສ່ວນ ຫຼື ທັງໝົດ ເມື່ອທ່ານມີແຜນສຸຂະພາບ.

### ແຜນສຸຂະພາບທີ່ຜ່ານຄຸນສົມບັດ

ແຜນສຸຂະພາບທີ່ເຂົ້າເກນມາດຕະຖານທາງດ້ານຄຸນນະພາບ, ລາຄາ ແລະ ການເຂົ້າເຖິງຕາມກົດໝາຍວ່າດ້ວຍການດູແລໃນລາຄາຍ່ອມເຍົາ. ແຜນທັງໝົດທີ່ມີໃຫ້ໃນ Washington Healthplanfinder ແມ່ນເຂົ້າເກນມາດຕະຖານເຫຼົ່ານີ້.

### ແຜນ Cascade Care Savings

ແຜນປະຢັດຕົ້ນທຶນຈາກ Washington Healthplanfinder. ແຜນ Cascade Care Savings ຈະຫຼຸດລາຄາ ແລະ ຄອບຄຸມການບໍລິການຫຼາຍຂຶ້ນ ກ່ອນເງິນທີ່ຕ້ອງຈ່າຍກ່ອນ.

### Apple Health

Apple Health ແມ່ນຊື່ສຳລັບ Medicaid ໃນລັດວໍຊິງຕັນ. ມັນຈະໃຫ້ການຄຸ້ມຄອງທີ່ບໍ່ເສຍຄ່າ ຫຼື ລາຄາຕໍ່າສຳລັບຄົນທີ່ມີຄຸນສົມບັດອີງໃສ່ລາຍໄດ້.

### ເບ້ຍປະກັນ

ເບ້ຍປະກັນຂອງທ່ານແມ່ນຈຳນວນເງິນທີ່ທ່ານຕ້ອງຈ່າຍໃນແຕ່ລະເດືອນ ສຳລັບແຜນສຸຂະພາບຂອງທ່ານ. ທ່ານຕ້ອງຈ່າຍເບ້ຍປະກັນຂອງທ່ານ ເຖິງແມ່ນວ່າທ່ານບໍ່ໄດ້ຮັບການບໍລິການດູແລສຸຂະພາບໃດໆ ເລີຍ.

### ເງິນທີ່ຕ້ອງຈ່າຍກ່ອນ

ເງິນທີ່ທ່ານຕ້ອງຈ່າຍກ່ອນ ແມ່ນຈຳນວນເງິນທີ່ທ່ານຕ້ອງຈ່າຍເປັນປົກກະຕິ ສຳລັບການດູແລເບິ່ງແຍງກ່ອນທີ່ແຜນສຸຂະພາບຂອງທ່ານຈະເລີ່ມຈ່າຍເງິນຮ່ວມກັນ. ການບໍລິການປ້ອງກັນແມ່ນສາມາດເຂົ້າເຖິງໄດ້ໂດຍບໍ່ເສຍຄ່າ ກ່ອນທີ່ທ່ານຈະຈ່າຍຄົບເງິນທີ່ທ່ານຕ້ອງຈ່າຍກ່ອນ. ຈຳນວນເງິນທີ່ທ່ານຕ້ອງຈ່າຍກ່ອນຈະເລີ່ມຕົ້ນໃນຊ່ວງຕົ້ນຂອງແຕ່ລະປີ.

### ຈຳນວນຕົວຈິງ

ຄ່າໃຊ້ຈ່າຍຕົວຈິງ ແມ່ນສິ່ງທີ່ທ່ານຕ້ອງຈ່າຍສຳລັບການດູແລສຸຂະພາບ. ພວກມັນສາມາດລວມເຖິງເງິນທີ່ທ່ານຕ້ອງຈ່າຍກ່ອນ, ເງິນປະກັນໄພຮ່ວມ ແລະ ເງິນຈ່າຍຮ່ວມ. ຈຳນວນເງິນໃດໜຶ່ງທີ່ບໍ່ໄດ້ຮັບການຄຸ້ມຄອງຕາມແຜນສຸຂະພາບຂອງທ່ານ ແມ່ນຄ່າໃຊ້ຈ່າຍຕົວຈິງ.

### Washington Healthplanfinder

Washington Healthplanfinder ແມ່ນບ່ອນເລືອກຊື້ແຜນສຸຂະພາບໃນລັດວໍຊິງຕັນ. ຖ້າທ່ານອາໄສໃນລັດວໍຊິງຕັນ, ທ່ານສາມາດສະໝັກຂໍການຄຸ້ມຄອງຜ່ານ Washington Healthplanfinder.

### ພົນລະເມືອງສະຫະລັດ

ບຸກຄົນທີ່ເກີດໃນສະຫະລັດ ຫຼື ດິນແດນຂອງສະຫະລັດ, ບຸກຄົນທີ່ປ່ຽນສັນຊາດເປັນພົນລະເມືອງສະຫະລັດ ແລະ ບຸກຄົນໃດໜຶ່ງທີ່ເກີດຢູ່ຕ່າງປະເທດ ແຕ່ມີພໍ່ແມ່ຢ່າງໜ້ອຍໜຶ່ງຄົນເປັນພົນລະເມືອງສະຫະລັດ.

### ສັນຊາດສະຫະລັດ

ບຸກຄົນທີ່ເກີດໃນເກາະອາເມຣິກັນຊາມົວ ຫຼື ເກາະສະເວນ ຫຼັງຈາກວັນທີ 24 ທັນວາ 1952 ແລະ ຜູ້ຢູ່ອາໄສໃນໝູ່ເກາະນອດເທີນມາເຣຍນາ ທີ່ບໍ່ເລືອກກາຍມາເປັນພົນລະເມືອງສະຫະລັດ.

### ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ

ຜູ້ອົບພະຍົບ ຫຼື ຜູ້ບໍ່ແມ່ນພົນລະເມືອງທີ່ຖືກຮັບເຂົ້າສະຫະລັດຢ່າງຖືກຕ້ອງຕາມກົດໝາຍ ແລະ ບໍ່ໄດ້ຢູ່ເກີນຊ່ວງເວລາທີ່ພວກເຂົາໄດ້ຮັບອະນຸຍາດ.

### ກອບເວລາ 5 ປີ

ຊ່ວງເວລາລໍຖ້າ 5 ປີ ສຳລັບຜູ້ອົບພະຍົບທີ່ມີຄຸນສົມບັດ ກ່ອນທີ່ພວກເຂົາຈະສາມາດມີຄຸນສົມບັດສຳລັບ Medicaid. ໂດຍປົກກະຕິແລ້ວ, ຊ່ວງເວລາລໍຖ້າ 5 ປີນີ້ຈະເລີ່ມຕົ້ນ ເມື່ອບຸກຄົນດັ່ງກ່າວໄດ້ຮັບສະຖານະການເຂົ້າເມືອງທີ່ຜ່ານຄຸນສົມບັດຂອງພວກເຂົາ, ບໍ່ແມ່ນເມື່ອພວກເຂົາເຂົ້າສະຫະລັດ. ບາງສະຖານະຜູ້ອົບພະຍົບແມ່ນໄດ້ຮັບການຍົກເວັ້ນຈາກກອບເວລາ 5 ປີ.

### ບໍ່ມີເອກະສານ

ຜູ້ບໍ່ແມ່ນພົນລະເມືອງທີ່ບໍ່ມີສະຖານະການເຂົ້າເມືອງໃນສະຫະລັດໃນປັດຈຸບັນ.

### ຄອບຄົວ "ສະຖານະປະສົມ"

ຄອບຄົວທີ່ມີສະຖານະການເຂົ້າເມືອງແຕກຕ່າງກັນ.

# ການປະກັນສຸຂະພາບແມ່ນຫຍັງ?

ການປະກັນສຸຂະພາບແມ່ນວິທີການທີ່ຄົນຈ່າຍເງິນສຳລັບການດູແລສຸຂະພາບເປັນປົກກະຕິ. ທ່ານຈ່າຍເບ້ຍປະກັນປະຈຳເດືອນ ແລະ ເມື່ອທ່ານໄດ້ຮັບການບໍລິການດູແລສຸຂະພາບ, ການປະກັນສຸຂະພາບຂອງທ່ານຈະຈ່າຍຄ່າບໍລິການບາງສ່ວນ ຫຼື ທັງໝົດ. ການມີການປະກັນສຸຂະພາບເປັນສິ່ງສຳຄັນ ເພາະການດູແລສຸຂະພາບສາມາດເປັນສິ່ງທີ່ມີລາຄາແພງຫຼາຍ!

ເຖິງແມ່ນວ່າທ່ານສຸຂະພາບດີ, ການມີການປະກັນສຸຂະພາບກໍເປັນສິ່ງສຳຄັນ. ບໍ່ແມ່ນພຽງແຕ່ວ່າ ອຸບັດຕິເຫດ ຫຼື ການເຈັບປ່ວຍສາມາດເກີດຂຶ້ນໄດ້ຕະຫຼອດເວລາ, ແຕ່ການມີການປະກັນສຸຂະພາບຈະເຮັດໃຫ້ທ່ານສາມາດເຂົ້າເຖິງການບໍລິການປ້ອງກັນປະຈຳ ເພື່ອຮັກສາໃຫ້ຕົວທ່ານເອງ ແລະ ຄອບຄົວຂອງທ່ານມີສຸຂະພາບດີ.

ການເຂົ້າເຖິງການດູແລສຸຂະພາບຈະເຮັດໃຫ້ຊຸມຊົນຂອງພວກເຮົາມີສຸຂະພາບດີ ແລະ ເຂັ້ມແຂງ!

**ຜົນປະໂຫຍດທາງດ້ານສຸຂະພາບທີ່ຈຳເປັນ**

ທຸກແຜນສຸຂະພາບໃນ Washington Healthplanfinder ຄອບຄຸມ 10 ຜົນປະໂຫຍດທາງດ້ານສຸຂະພາບທີ່ຈຳເປັນ. ສິ່ງເຫຼົ່ານີ້ລວມເຖິງ:

- ການເຂົ້າພົບທ່ານໝໍ ແລະ ການພັກເຊົາຢູ່ໂຮງໝໍ
- ການເດີນທາງເຂົ້າຫ້ອງສຸກເສີນ
- ການດູແລກ່ອນ ແລະ ຫຼັງຈາກທີ່ລູກຂອງທ່ານເກີດ
- ການປິ່ນປົວສຸຂະພາບຈິດ ແລະ ການໃຊ້ສານເສບຕິດ
- ຢາຕາມໃບສັ່ງແພດ
- ການບໍລິການ ແລະ ອຸປະກອນເພື່ອຊ່ວຍໃຫ້ທ່ານຟື້ນຕົວ ຖ້າທ່ານບາດເຈັບ ຫຼື ຖ້າທ່ານມີຄວາມພິການ ຫຼື ອາການຊຳເຮື້ອ
- ຜົນກວດຈາກຫ້ອງທົດລອງ
- ການບໍລິການປ້ອງກັນ ລວມເຖິງການໃຫ້ຄຳປຶກສາ, ການກວດຄັດກອງ ແລະ ການສັກວັກຊີນ
- ການຈັດການພະຍາດຊຳເຮື້ອ, ເຊັ່ນ: ພະຍາດເບົາຫວານ ຫຼື ພະຍາດຫອບຫືດ
- ການດູແລເດັກ

# ຕົວເລືອກການດູແລສຸຂະພາບສຳລັບຜູ້ອົບພະຍົບ

### ຕົວເລືອກການຄຸ້ມຄອງທີ່ສົມບູນ

ຕົວເລືອກການດູແລເຫຼົ່ານີ້ຄອບຄຸມການເຂົ້າພົບທ່ານໝໍ, ການດູແລຢູ່ໂຮງໝໍ, ຢາຕາມໃບສັ່ງແພດ ແລະ ອື່ນໆ ອີກ.

| ໂຄງການ | ຜູ້ໃດມີສິດ? |
|---|---|
| ແຜນ Cascade Care | ✅ ທຸກຄົນ |
| ເຄຣດິດອາກອນ | ✅ ຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ, ລວມທັງຜູ້ໄດ້ຮັບ DACA<br>❌ ຄົນທີ່ບໍ່ມີເອກະສານ |
| Cascade Care Savings | ✅ ທຸກຄົນ |
| Apple Health | ✅ ຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍກາຍກອບເວລາ 5 ປີ**<br>❌ ຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງບໍ່ກາຍກອບເວລາ 5 ປີ*<br>❌ ຄົນທີ່ບໍ່ມີເອກະສານ<br>❌ ຜູ້ບໍ່ມີຄຸນສົມບັດ ຊຶ່ງຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ<br>*ກະລຸນາເບິ່ງ "ຜູ້ໃດໄດ້ຮັບການຍົກເວັ້ນຈາກກອບເວລາ 5 ປີ" ໃນໜ້າທີ 11 |
| Apple Health for Kids (Apple Health ສຳລັບເດັກ) | ✅ ທຸກຄົນ |
| After-Pregnancy Coverage (ການຄຸ້ມຄອງຫຼັງຖືພາ) | ✅ ທຸກຄົນ |
| Apple Health Expansion (ການຂະຫຍາຍ Apple Health)**<br>**Apple Health Expansion (ການຂະຫຍາຍ Apple Health) ແມ່ນໂຄງການລົງທະບຽນແບບຈຳກັດ.<br>*** ບາງສະຖານະທີ່ບໍ່ມີຄຸນສົມບັດ ແຕ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ ອາດມີສິດ ຖ້າພວກເຂົາບໍ່ໄດ້ຮັບອະນຸຍາດໃຫ້ເຮັດວຽກ. | ✅ ຄົນທີ່ບໍ່ມີເອກະສານ<br>❌ ຜູ້ບໍ່ມີຄຸນສົມບັດ ຊຶ່ງຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ***<br>❌ ຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍກາຍກອບເວລາ 5 ປີ<br>❌ ຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງບໍ່ກາຍກອບເວລາ 5 ປີ<br>❌ ພົນລະເມືອງ ແລະ ສັນຊາດສະຫະລັດ<br>❌ ຜູ້ເຂົ້າເມືອງຕັ້ງແຕ່ເດັກ |

## ຕົວເລືອກການຄຸ້ມຄອງແບບຈຳກັດ

ແຜນເຫຼົ່ານີ້ຄອບຄຸມການບໍລິການ ຫຼື ສະຖານະການໃດໜຶ່ງ.

| ໂຄງການ | ຜູ້ໃດມີສິດ? |
|---|---|
| Family Planning Only (ການວາງແຜນຄອບຄົວເທົ່ານັ້ນ) | ✅ ທຸກຄົນ |
| Medical Care Services (ການບໍລິການດູແລທາງການແພດ) | ✅ ຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງບໍ່ກາຍກອບເວລາ 5 ປີ*<br>✅ ຄົນທີ່ບໍ່ມີເອກະສານ*<br>❌ ຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ ກາຍກອບເວລາ 5 ປີ<br>❌ ພົນລະເມືອງ ແລະ ສັນຊາດສະຫະລັດ<br>*ຖ້າມີສິດສຳລັບໂຄງການທີ່ເຊື່ອມໂຍງກັບ WAC 388-424-0001(4) |
| Apple Health for Pregnant Individuals (Apple Health ສຳລັບບຸກຄົນຖືພາ) | ✅ ທຸກຄົນ |
| Alien Emergency Medical (ການແພດສຸກເສີນສຳລັບຄົນຕ່າງດ້າວ) | ✅ ຜູ້ບໍ່ມີຄຸນສົມບັດ ຊຶ່ງຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ***<br>✅ ຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງບໍ່ກາຍກອບເວລາ 5 ປີ*<br>✅ ຄົນທີ່ບໍ່ມີເອກະສານ<br>❌ ຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ ກາຍກອບເວລາ 5 ປີ<br>❌ ພົນລະເມືອງ ແລະ ສັນຊາດສະຫະລັດ |

# ຂ້າພະເຈົ້າມີສິດບໍ?

ຖ້າທ່ານອາໄສໃນລັດວໍຊິງຕັນ, ບໍ່ວ່າທ່ານຈະມີສະຖານະການເຂົ້າເມືອງເປັນແນວໃດກໍຕາມ, ທ່ານສາມາດຮັບແຜນປະກັນສຸຂະພາບຜ່ານ Washington Healthplanfinder. ເຖິງແມ່ນວ່າທ່ານບໍ່ມີເອກະສານ, ມີຕົວເລືອກການດູແລສຸຂະພາບໃຫ້ແກ່ທ່ານ.

## ສະຖານະທີ່ມີຄຸນສົມບັດ ແລະ ບໍ່ມີຄຸນສົມບັດ

ສະຖານະຜູ້ອົບພະຍົບທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍແມ່ນ "ມີຄຸນສົມບັດ" ຫຼື "ບໍ່ມີຄຸນສົມບັດ".

ສະຖານະຜູ້ບໍ່ມີຄຸນສົມບັດທົ່ວໄປທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍລວມເຖິງ:

- ຜູ້ບໍ່ອົບພະຍົບທີ່ໄດ້ຮັບອະນຸຍາດໃຫ້ເຂົ້າສະຫະລັດ ເພື່ອຈຸດປະສົງທີ່ສະເພາະສຳລັບເວລາທີ່ຈຳກັດ ເຊັ່ນ: ຜູ້ຢ້ຽມຢາມທາງທຸລະກິດ, ນັກສຶກສາ ຫຼື ນັກທ່ອງທ່ຽວ
- ຜູ້ໄດ້ຮັບອະນຸຍາດໃຫ້ຢູ່ຊົ່ວຄາວ – ຖ້າສະຖານະການຢູ່ຊົ່ວຄາວທີ່ອະນຸຍາດໃຫ້ແມ່ນໜຶ່ງປີ ຫຼື ໜ້ອຍກວ່ານັ້ນ
- ສະຖານະຄຸ້ມຄອງຊົ່ວຄາວທີ່ອະນຸຍາດໃຫ້ເທົ່ານັ້ນ
- ຜູ້ສະໝັກຂໍການປ່ຽນແປງທາງດ້ານສະຖານະ
- ຮ້ອງຮຽນດ້ວຍຕົນເອງຕາມ VAWA ແຕ່ບໍ່ທັນໄດ້ຮັບເງື່ອນໄຂສິດຕາມ "ແຈ້ງການທີ່ມີຫຼັກຖານພຽງພໍ"
- ການດຳເນີນການຜ່ອນຜັນ, ການຍົກເລີກການເອົາອອກຈາກປະເທດ ຫຼື ການລະງັບບໍ່ໃຫ້ເນລະເທດທີ່ອະນຸຍາດໃຫ້
- ຄຳສັ່ງດູແລຕິດຕາມທີ່ອະນຸຍາດໃຫ້
- ການພັກເນລະເທດທີ່ອະນຸຍາດໃຫ້
- ວີຊ່າສະຖານະ K, S, U ຫຼື V

ຖ້າທ່ານມີສະຖານະ "ບໍ່ມີຄຸນສົມບັດ" ໃນຕອນນີ້, ທ່ານຍັງມີສິດສຳລັບໂຄງການດູແລສຸຂະພາບໃດໜຶ່ງໃນລັດວໍຊິງຕັນ.

ຖ້າທ່ານມີສະຖານະຜູ້ອົບພະຍົບທີ່ມີຄຸນສົມບັດ, ໂດຍສ່ວນໃຫຍ່ແລ້ວ ທ່ານຕ້ອງຜ່ານກອບເວລາ 5 ປີ ກ່ອນທີ່ຈະເລີ່ມມີສິດສຳລັບ Medicaid.

## ກອບເວລາ 5 ປີ ແມ່ນຫຍັງ?

ລັດຖະບານກາງກໍານົດໃຫ້ຜູ້ອົບພະຍົບທີ່ມີຄຸນສົມບັດຕ້ອງລໍຖ້າຫ້າປີ ກ່ອນທີ່ຈະເລີ່ມມີສິດສໍາລັບ Medicaid. ໃນລັດວໍຊິງຕັນ, Medicaid ແມ່ນເອີ້ນວ່າ Washington Apple Health. ຊ່ວງເວລາລໍຖ້າ 5 ປີນີ້ແມ່ນເອີ້ນວ່າ ກອບເວລາ 5 ປີ. ໂດຍປົກກະຕິແລ້ວ, ຊ່ວງເວລາລໍຖ້າ 5 ປີ ຈະເລີ່ມຕົ້ນ ເມື່ອບຸກຄົນດັ່ງກ່າວໄດ້ຮັບສະຖານະຜູ້ອົບພະຍົບທີ່ມີຄຸນສົມບັດຂອງພວກເຂົາ, ບໍ່ແມ່ນເມື່ອພວກເຂົາໄດ້ເຂົ້າສະຫະລັດ. ບາງສະຖານະຜູ້ອົບພະຍົບແມ່ນໄດ້ຮັບການຍົກເວັ້ນຈາກກອບເວລາ 5 ປີ.

## ຜູ້ໃດໄດ້ຮັບການຍົກເວັ້ນຈາກກອບເວລາ 5 ປີ?

**▶ ຕ້ອງບັນລຸກອບເວລາ 5 ປີ ເວັ້ນເສຍແຕ່ວ່າຈະຖືກຍົກເວັ້ນ**

- ຜູ້ຢູ່ອາໄສຖາວອນທີ່ຖືກຕ້ອງຕາມກົດໝາຍ (LPR) - ເບິ່ງໝາຍເຫດ 2 ຂ້າງລຸ່ມ.
- ຜູ້ໄດ້ຮັບອະນຸຍາດໃຫ້ຢູ່ຊົ່ວຄາວ - ຖ້າໄດ້ຮັບອະນຸຍາດໃຫ້ຢູ່ຊົ່ວຄາວ ຢ່າງໜ້ອຍໜຶ່ງປີຕາມ §212(d)(5) ຂອງກົດໝາຍວ່າດ້ວຍການອົບພະຍົບ ແລະ ສັນຊາດ (INA).
- ຜົວເມຍ ແລະ ເດັກທີ່ຖືກລ່ວງລະເມີດ ໂດຍມີແຈ້ງການ I-130 ທີ່ມີການອະນຸມັດ "ດ້ວຍຫຼັກຖານພຽງພໍ" ຫຼື ການຮ້ອງຮຽນດ້ວຍຕົນເອງທີ່ກໍາລັງດໍາເນີນການ ຫຼື ຖືກອະນຸມັດແລ້ວ ຕາມກົດໝາຍວ່າດ້ວຍການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (VAWA).
- ຖືກຮັບເຂົ້າສະຫະລັດເປັນຜູ້ເຂົ້າປະເທດຕາມເງື່ອນໄຂ ກ່ອນວັນທີ 1 ເມສາ 1980, ຕາມ 203(a)(7) ຂອງ INA.



### ຖືກຍົກເວັ້ນຈາກກອບເວລາ 5 ປີ

- ຄົນອາເມຣິກາ-ອາຊີ ທີ່ເປັນລູກຂອງສະມາຊິກໃຫ້ບໍລິການຕິດອາວຸດທີ່ເປັນພົນລະເມືອງສະຫະລັດ ໃນປະເທດເກົາຫຼີ, ຫວຽດນາມ, ລາວ, ກໍາປູເຈຍ ຫຼື ໄທ ຫຼັງຈາກວັນທີ 31 ທັນວາ 1950, ແຕ່ກ່ອນວັນທີ 22 ຕຸລາ 1982 ຊຶ່ງຖືກຮັບເຂົ້າສະຫະລັດໃນຖານະຜູ້ອົບພະຍົບ ຕາມ §584 ຂອງກົດໝາຍວ່າດ້ວຍການປະຕິບັດການຢູ່ຕ່າງປະເທດ, ການສະໜອງທຶນແກ່ການສົ່ງອອກ ແລະ ການຈັດສັນໂຄງການທີ່ກ່ຽວຂ້ອງ.
- ບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ຢູ່ຊົ່ວຄາວໃນຖານະຜູ້ລີ້ໄພ ຫຼື ຜູ້ຫຼົບໄພ ຕາມ §212(d)(5) ຂອງ INA.
- ຜູ້ລີ້ໄພທີ່ຮັບເຂົ້າປະເທດຕາມ §207 ຂອງ INA.
- ສະມາຊິກຊົນເຜົ່າມົ້ງ ແລະ ຊົນເຜົ່າລາວສູງທີ່ໃຫ້ການຊ່ວຍເຫຼືອແກ່ທະຫານສະຫະລັດ ໃນລະຫວ່າງຍຸກຫວຽດນາມ ຕັ້ງແຕ່ 5 ສິງຫາ 1965 ຈົນຮອດ 7 ພຶດສະພາ 1975.
- ຜູ້ອົບພະຍົບພິເສດຈາກປະເທດອີຣັກ ຫຼື ອັບການິດສະຖານ ທີ່ຖືກຮັບເຂົ້າສະຫະລັດດ້ວຍໜຶ່ງໃນເຫດຜົນດັ່ງຕໍ່ໄປນີ້:
  - ສະຖານະຜູ້ອົບພະຍົບພິເສດຕາມມາດຕາ §101(a)(27) ຂອງ INA;
  - ຜູ້ຢູ່ອາໄສຖາວອນຕາມເງື່ອນໄຂຜູ້ອົບພະຍົບພິເສດ; ຫຼື
  - ໄດ້ຮັບອະນຸຍາດໃຫ້ຢູ່ຊົ່ວຄາວຕາມມາດຕາ 602(b)(1) ຂອງກົດໝາຍວ່າດ້ວຍການປົກປ້ອງພັນທະມິດອັບກັນ ຫຼື ມາດຕາ 1059(a) ຂອງກົດໝາຍວ່າດ້ວຍການອະນຸຍາດໃຫ້ປ້ອງກັນປະເທດສະບັບປີ 2006.
- ອີງຕາມມາດຕາ 2502 ຂອງກົດໝາຍວ່າດ້ວຍການຈັດສັນເສີມປະກອບສໍາລັບປະເທດອັບການິດສະຖານ ສະບັບປີ 2022 ແລະ ກົດໝາຍວ່າດ້ວຍການຈັດສັນແບບສັງລວມ ສະບັບປີ 2023, ຄົນອັບກັນທີ່ໄດ້ຮັບອະນຸຍາດໃຫ້ຢູ່ຊົ່ວຄາວດ້ວຍເຫດຜົນທາງມະນຸດສະທໍາ ໃນລະຫວ່າງວັນທີ 31 ກໍລະກົດ 2021 ແລະ 30 ກັນຍາ 2023 ແລະ ຜົວເມຍ ແລະ ລູກຂອງພວກເຂົາ ແລະ ພໍ່ແມ່ ແລະ ຜູ້ປົກຄອງຂອງຜູ້ເຍົາທີ່ບໍ່ມີຜູ້ຕິດຕາມ ຊຶ່ງໄດ້ຮັບອະນຸຍາດໃຫ້ຢູ່ຊົ່ວຄາວຫຼັງຈາກວັນທີ 30 ກັນຍາ 2022 ແມ່ນຖືກປະເມີນໃຫ້ເປັນຜູ້ອົບພະຍົບທີ່ມີຄຸນສົມບັດ ຈົນຮອດວັນທີ 31 ມີນາ 2023 ຫຼື ທ້າຍໄລຍະການອະນຸຍາດໃຫ້ຢູ່ຊົ່ວຄາວຂອງພວກເຂົາ ຊຶ່ງເປັນກໍລະນີໃດກໍຕາມທີ່ເກີດຂຶ້ນຫຼັງ.
- ຄົນສັນຊາດອູແກຣນ ແລະ ຜູ້ທີ່ບໍ່ມີສັນຊາດອູແກຣນ ທີ່ອາໄສໃນປະເທດອູແກຣນຢ່າງຕໍ່ເນື່ອງ ຊຶ່ງໄດ້ຮັບອະນຸຍາດໃຫ້ຢູ່ຊົ່ວຄາວດ້ວຍເຫດຜົນທາງມະນຸດສະທໍາ ໃນລະຫວ່າງວັນທີ 24 ກຸມພາ 2022 ແລະ 30 ກັນຍາ 2024. ຜົວເມຍ ແລະ ລູກຂອງພວກເຂົາ ແລະ ພໍ່ແມ່ ແລະ ຜູ້ປົກຄອງຂອງຜູ້ເຍົາທີ່ບໍ່ມີຜູ້ຕິດຕາມ ຊຶ່ງໄດ້ຮັບອະນຸຍາດໃຫ້ຢູ່ຊົ່ວຄາວຫຼັງຈາກວັນທີ 30 ກຸມພາ 2024 ຕາມມາດຕາ 401 ຂອງກົດໝາຍວ່າດ້ວຍການຈັດສັນເສີມປະກອບເພີ່ມເຕີມສໍາລັບຄົນອູແກຣນ ສະບັບປີ 2022 ແລະ ຕາມກົດໝາຍວ່າດ້ວຍການຈັດສັນງົບປະມານເພີ່ມເຕີມຂອງ Ukraine ປີ 2024 ແມ່ນຖືກປະເມີນໃຫ້ເປັນຜູ້ອົບພະຍົບທີ່ມີຄຸນສົມບັດ.

- ຜູ້ເຄາະຮ້າຍຈາກການຄ້າມະນຸດ ຕາມກົດໝາຍວ່າດ້ວຍການປົກປ້ອງການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງ ສະບັບປີ 2000.
- ຜູ້ຫຼົບໄພທີ່ໄດ້ຮັບສະຖານະຕາມ §208 ຂອງ INA.
- ຜູ້ເຂົ້າປະເທດທີ່ເປັນຄົນກູບາ/ໄຮຕີ ຕາມຂໍ້ກຳນົດໃນ 45 CFR §401.2[3] ລວມເຖິງບຸກຄົນທີ່ຖືກອະນຸມັດຕາມໂຄງການອະນຸຍາດໃຫ້ຢູ່ຊົ່ວຄາວເພື່ອການຮວມຕົວກັນໃໝ່ຂອງຄອບຄົວໄຮຕີ (HFRP).
- ບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ບໍ່ຖືກເນລະເທດ ຫຼື ເອົາອອກຈາກປະເທດ.
- ພົນລະເມືອງຂອງສະຫະພັນລັດໄມໂຄຣນີເຊຍ, ສາທາລະນະປາເລົາ ຫຼື ສາທາລະນະລັດໝູ່ເກາະມາຊອລທີ່ອາໄສໃນສະຫະລັດ ຕາມຂໍ້ຕົກລົງການສະມາຄົມເສລີ.
- ຄົນອິນເດຍອາເມຣິກາທີ່ມີຄຸນສົມບັດ ຊຶ່ງເກີດຢູ່ຕ່າງປະເທດຕາມທີ່ອະທິບາຍຂ້າງເທິງ ແມ່ນຖືກຈັດປະເພດໃຫ້ເປັນພົນລະເມືອງສະຫະລັດໂດຍປົກກະຕິ, ພວກເຂົາອາດຖືກຈັດປະເພດໃຫ້ເປັນຜູ້ຢູ່ອາໄສຖາວອນທີ່ຖືກຕ້ອງຕາມກົດໝາຍ (LPR) ພາຍໃຕ້ໂຄງການ MAGI. ພວກເຂົາບໍ່ຈຳເປັນຕ້ອງມີ ຫຼື ໃຫ້ການຢັ້ງຢືນສະຖານະ LPR.

*ໝາຍເຫດ: ກອບເວລາ 5 ປີ ບໍ່ມີຜົນນຳໃຊ້ກັບບຸກຄົນທີ່ໄດ້ຮັບ "ສະຖານະຜູ້ອົບພະຍົບທີ່ມີຄຸນສົມບັດພາຍໃນ 5 ປີກ່ອນໜ້າ, ຖ້າພວກເຂົາໄດ້ຢູ່ສະຫະລັດກ່ອນວັນທີ 8 ສິງຫາ 1996 ແລະ ສືບຕໍ່ອາໄສໃນສະຫະລັດ ນັບຕັ້ງແຕ່ວັນທີ 22 ສິງຫາ 1996, ໃຫ້ເບິ່ງ WAC 182-503-0535.*

*ໝາຍເຫດ: ລະຫັດໝວດໝູ່ໃນບັດຜູ້ຢູ່ອາໄສຖາວອນ I-551 (ບັດຂຽວ) ບົ່ງບອກວິທີການທີ່ LPR ເຂົ້າສະຫະລັດ ຖ້າບຸກຄົນໃດໜຶ່ງເຂົ້າສະຫະລັດພາຍໃຕ້ສະຖານະທີ່ຖືກຍົກເວັ້ນຈາກກອບເວລາ 5 ປີ ແລະ ມີສະຖານະ LPR ຕໍ່າກວ່າ 5 ປີ, ພວກເຂົາຍັງຖືກຍົກເວັ້ນຈາກກອບເວລາ 5 ປີ.*

# ຂ້າພະເຈົ້າມີຕົວເລືອກຫຍັງແດ່?

**ຂ້າພະເຈົ້າເປັນຜູ້ອົບພະຍົບ "ທີ່ມີຄຸນສົມບັດ" ທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ. ຂ້າພະເຈົ້າມີຕົວເລືອກຫຍັງແດ່?**

- ພາຍກອບເວລາ 5 ປີ (ຖ້າຈຳເປັນ):
  - ແຜນສຸຂະພາບທີ່ມີຄຸນສົມບັດ (ເຊັ່ນ: Cascade Care)
  - Apple Health
  - Apple Health for Kids (Apple Health ສຳລັບເດັກ)
  - Apple Health Family Planning Only (ການວາງແຜນຄອບຄົວ Apple Health ເທົ່ານັ້ນ)
  - Apple Health for Pregnant Individuals (Apple Health ສຳລັບບຸກຄົນຖືພາ)
  - Apple Health After-Pregnancy Coverage (ການຄຸ້ມຄອງຫຼັງຖືພາຂອງ Apple Health)
- ບໍ່ກາຍກອບເວລາ 5 ປີ:
  - ແຜນສຸຂະພາບທີ່ຜ່ານຄຸນສົມບັດ (ເຊັ່ນ: Cascade Care)
  - Apple Health for Kids (Apple Health ສຳລັບເດັກ)
  - Apple Health Family Planning Only (ການວາງແຜນຄອບຄົວ Apple Health ເທົ່ານັ້ນ)
  - Apple Health for Pregnant Individuals (Apple Health ສຳລັບບຸກຄົນຖືພາ)
  - Apple Health After-Pregnancy Coverage (ການຄຸ້ມຄອງຫຼັງຖືພາຂອງ Apple Health)
  - Medical Care Services (ການບໍລິການດູແລທາງການແພດ)
  - Alien Emergency Medical (ການແພດສຸກເສີນສຳລັບຄົນຕ່າງດ້າວ)

**ຂ້າພະເຈົ້າເປັນຜູ້ອົບພະຍົບ "ທີ່ບໍ່ມີຄຸນສົມບັດ" ທີ່ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍ. ຂ້າພະເຈົ້າມີຕົວເລືອກຫຍັງແດ່?**

- ແຜນສຸຂະພາບທີ່ຜ່ານຄຸນສົມບັດ (ເຊັ່ນ: Cascade Care)
- Apple Health for Kids (Apple Health ສຳລັບເດັກ)
- Apple Health Family Planning Only (ການວາງແຜນຄອບຄົວ Apple Health ເທົ່ານັ້ນ)
- Apple Health for Pregnant Individuals (Apple Health ສຳລັບບຸກຄົນຖືພາ)
- Apple Health After-Pregnancy Coverage (ການຄຸ້ມຄອງຫຼັງຖືພາຂອງ Apple Health)
- Medical Care Services (ການບໍລິການດູແລທາງການແພດ)
- Alien Emergency Medical (ການແພດສຸກເສີນສຳລັບຄົນຕ່າງດ້າວ)

## ຂ້າພະເຈົ້າເປັນຄົນທີ່ບໍ່ມີເອກະສານ. ຂ້າພະເຈົ້າມີຕົວເລືອກຫຍັງແດ່?

- ແຜນສຸຂະພາບທີ່ມີຄຸນສົມບັດ (ເຊັ່ນ: Cascade Care)
- Apple Health for Kids (Apple Health ສຳລັບເດັກ)
- Apple Health Family Planning Only (ການວາງແຜນຄອບຄົວ Apple Health ເທົ່ານັ້ນ)
- Apple Health for Pregnant Individuals (Apple Health ສຳລັບບຸກຄົນຖືພາ)
- Apple Health After-Pregnancy Coverage (ການຄຸ້ມຄອງຫຼັງຖືພາຂອງ Apple Health)
- Medical Care Services (ການບໍລິການດູແລທາງການແພດ) - ຖ້າມີສິດສຳລັບໂຄງການທີ່ເຊື່ອມໂຍງກັບ WAC 388-424-0001(4)
- Alien Emergency Medical (ການແພດສຸກເສີນສຳລັບຄົນຕ່າງດ້າວ)
- Apple Health Expansion (ການຂະຫຍາຍ Apple Health)*

## ຄອບຄົວຂອງຂ້ອຍມີສະຖານະການເຂົ້າເມືອງປະສົມ. ພວກເຮົາມີຕົວເລືອກຫຍັງແດ່?

ບາງຄອບຄົວມີ “ສະຖານະປະສົມ” ທີ່ສະມາຊິກມີສະຖານະການເຂົ້າເມືອງແຕກຕ່າງກັນ ຊຶ່ງອາດເຮັດໃຫ້ພວກເຂົາມີສິດສຳລັບໂຄງການທີ່ແຕກຕ່າງກັນ. ຄອບຄົວທີ່ມີສະຖານະປະສົມ ສາມາດສະໝັກຂໍປະກັນສຸຂະພາບ ແລະ Apple Health ຜ່ານ Washington Healthplanfinder.

## ຄົນອິນເດຍອາເມຣິກາ ແລະ ຄົນພື້ນເມືອງອາລັດສະກາ (AI/AN)

ຄົນອິນເດຍອາເມຣິກາ ແລະ ຄົນພື້ນເມືອງອາລັດສະກາທີ່ມີຄຸນສົມບັດ ຊຶ່ງເກີດຢູ່ຕ່າງປະເທດແມ່ນມີເງື່ອນໄຂສິດດຽວກັນກັບພົນລະເມືອງສະຫະລັດ.

ຄົນອິນເດຍອາເມຣິກາ ແລະ ຄົນພື້ນເມືອງອາລັດສະກາທີ່ມີຄຸນສົມບັດ ຊຶ່ງເກີດຢູ່ຕ່າງປະເທດແມ່ນລວມເຖິງ:

- ບຸກຄົນທີ່ເກີດໃນປະເທດການາດາ ຊຶ່ງມີສາຍເລືອດອິນເດຍອາເມຣິກາຢ່າງໜ້ອຍຫ້າສິບສ່ວນຮ້ອຍ, ບໍ່ວ່າຈະເປັນສະມາຊິກຊົນເຜົ່າໃດກໍຕາມ; ຫຼື
- ບຸກຄົນທີ່ເກີດນອກສະຫະລັດທີ່ເປັນ:
  - ສະມາຊິກຂອງຊົນເຜົ່າທີ່ລັດຖະບານກາງຮັບຮູ້
  - ຄົນພື້ນເມືອງອາລັດສະກາທີ່ຂຶ້ນທະບຽນໂດຍລັດຖະມົນຕີກະຊວງພາຍໃນຕາມກົດໝາຍວ່າດ້ວຍການອ້າງສິດຕັ້ງຖິ່ນຖານຂອງຄົນພື້ນເມືອງອາລັດສະກາ.

*Apple Health Expansion (ການຂະຫຍາຍ Apple Health) ແມ່ນໂຄງການລົງທະບຽນແບບຈຳກັດ.

# ການບໍລິການດູແລສຸຂະພາບທີ່ບໍ່ເສຍຄ່າ ຫຼື ລາຄາຕໍ່າ

## Cascade Care Savings

ແຜນ Cascade Care ແມ່ນແຜນສຸຂະພາບຄຸນນະພາບສູງ ຊຶ່ງມີໃຫ້ໃນລາຄາຕໍ່າກວ່າແຜນອື່ນໆ. ພວກມັນແມ່ນມີໃຫ້ຜ່ານ Washington Healthplanfinder ເທົ່ານັ້ນ. ແຜນທັງໝົດເຂົ້າເກນ ຫຼື ເກີນເກນມາດຕະຖານ ACA ສຳລັບລາຄາ ແລະ ການບໍລິການທີ່ຢູ່ໃນການຄຸ້ມຄອງ. ແຜນ Cascade Care ແມ່ນມີໃຫ້ແກ່ທຸກຄົນທີ່ຢູ່ອາໄສໃນລັດວໍຊິງຕັນ.

ແຜນ Cascade Care ແມ່ນມີໃຫ້ຜ່ານ Washington Healthplanfinder ເທົ່ານັ້ນ.

## Washington Apple Health

Apple Health ແມ່ນຊື່ສຳລັບ Medicaid ໃນລັດວໍຊິງຕັນ.

Apple Health ຈະໃຫ້ການຄຸ້ມຄອງສຸຂະພາບທີ່ບໍ່ເສຍຄ່າ ຫຼື ລາຄາຕໍ່າແກ່ຜູ້ມີຄຸນສົມບັດ.

ກອບເວລາ 5 ປີ ບໍ່ມີຜົນນຳໃຊ້ກັບ Apple Health for Pregnant Individuals (Apple Health ສຳລັບບຸກຄົນຖືພາ), Family Planning Only (ການວາງແຜນຄອບຄົວເທົ່ານັ້ນ) ແລະ Apple Health for Kids (Apple Health ສຳລັບເດັກ). ນີ້ໝາຍຄວາມວ່າ ບຸກຄົນທີ່ມີສະຖານະການເຂົ້າເມືອງອາດມີສິດສຳລັບໂຄງການເຫຼົ່ານີ້.

ໂຄງການສ່ວນໃຫຍ່ຂອງ Apple Health ມີຂີດຈຳກັດທາງການລາຍໄດ້ ແລະ ເງື່ອນໄຂສິດອື່ນໆ.

Apple Health ແມ່ນມີໃຫ້ໝົດປີ. ທ່ານສາມາດສະໝັກຂໍ Apple Health ໄດ້ຕະຫຼອດເວລາ.

# ບ່ອນສະໝັກຂໍ

ມັນງ່າຍທີ່ຈະສະໝັກຂໍການຄຸ້ມຄອງສຸຂະພາບຜ່ານ Washington Healthplanfinder. ເຂົ້າເບິ່ງ **wahealthplanfinder.org** ຫຼື ລົງທະບຽນກັບຜູ້ໃຫ້ການຊ່ວຍເຫຼືອຊ່ອງໜ້າ ຫຼື ຜ່ານອິນເຕີເນັດ. ການຊ່ວຍເຫຼືອທາງດ້ານພາສາແມ່ນມີໃຫ້ຫຼາຍກວ່າ 200+ ພາສາ.

ທຸກຄົນສາມາດລົງທະບຽນໃນລະຫວ່າງການລົງທະບຽນແບບເປີດ. ການລົງທະບຽນແບບເປີດເກີດຂຶ້ນທຸກປີນັບຕັ້ງແຕ່ວັນທີ 1 ພະຈິກ ແລະ ສິ້ນສຸດໃນວັນທີ 15 ມັງກອນ.

ເຫດການຊີວິດບາງຢ່າງເຮັດໃຫ້ທ່ານສາມາດລົງທະບຽນສຳລັບແຜນສຸຂະພາບຢູ່ນອກຊ່ວງການລົງທະບຽນແບບເປີດ. ສິ່ງນີ້ແມ່ນເອີ້ນວ່າ ຊ່ວງເວລາລົງທະບຽນແບບພິເສດ. ເຫດການຊີວິດສາມາດລວມເຖິງການເສຍວຽກ, ການເກີດລູກ, ການຮັບເດັກມາລ້ຽງ, ການແຕ່ງດອງ ແລະ ອື່ນໆ ອີກ.

ຖ້າທ່ານມີຄຸນສົມບັດສຳລັບ Apple Health, ທ່ານສາມາດລົງທະບຽນໄດ້ຕະຫຼອດເວລາ.

**wahealthplanfinder.org**



# ກ່ຽວກັບ Exchange

### ພາລະກິດຂອງພວກເຮົາ

Washington Healthplanfinder ພະຍາຍາມປັບປຸງວິທີການທີ່ປະຊາຊົນໃນລັດວໍຊິງຕັນ ຊອກຫາ ແລະ ຮັກສາການຄຸ້ມຄອງສຸຂະພາບ. ພວກເຮົາເຮັດສິ່ງນີ້ ໂດຍໃຫ້ເຄື່ອງມືທີ່ໃຊ້ໄດ້ງ່າຍ ແລະ ສ່ວນຫຼຸດທີ່ທ່ານສາມາດຊອກຫາໄດ້ຜ່ານພວກເຮົາເທົ່ານັ້ນ. ຄຸນຄ່າຄວາມເທົ່າທຽມ, ຄວາມຊື່ສັດ ແລະ ຄວາມເຄົາລົບຂອງພວກເຮົາບົ່ງບອກທຸກສິ່ງທີ່ພວກເຮົາເຮັດ.

washington
healthbenefitexchange
powering washington healthplanfinder



## ຄຳຖະແຫຼງຄວາມເທົ່າທຽມຂອງພວກເຮົາ

ຄວາມເທົ່າທຽມແມ່ນພື້ນຖານສຳລັບພາລະກິດຂອງ Washington Health Benefit Exchange. ຂະບວນການກ້າວໜ້າສູ່ຄວາມເທົ່າທຽມ ແລະ ການກາຍເປັນຜູ້ຕໍ່ຕ້ານການຈຳແນກເຊື້ອຊາດ ແລະ ຮຽກຮ້ອງໃຫ້ມີການເຝົ້າລະວັງ ເພື່ອມ້າງທຳລາຍລະບົບອະພິສິດ ແລະ ການກົດຂີ່ທີ່ຝັງເລິກ. ໃນຂະນະທີ່ການຈຳແນກເຊື້ອຊາດຢ່າງເປັນລະບົບຄືສາເຫດຕົ້ນຕໍຂອງຄວາມບໍ່ເທົ່າທຽມຫຼາຍຢ່າງໃນສັງຄົມ, ພວກເຮົາຍັງຕ້ອງນຳໃຊ້ວິທີການແບບມີປະຕິສຳພັນ ເພື່ອແກ້ໄຂອະຄະຕິ ແລະ ການກົດຂີ່ທຸກຮູບແບບ ຊຶ່ງມີການຕອບໂຕ້ ແລະ ມັກເຮັດໃຫ້ຄວາມບໍ່ເທົ່າທຽມທາງເຊື້ອຊາດຮ້າຍແຮງຂຶ້ນ.

ເພື່ອໃຫ້ປະສົບຄວາມສຳເລັດ, ພວກເຮົາຕ້ອງຮັບຮູ້ຕົວຂັບເຄື່ອນທາງດ້ານເສດຖະກິດ-ສັງຄົມໃນຂົງເຂດສຸຂະພາບ ແລະ ໃຫ້ຄວາມມສຳຄັນແກ່ຄົນ ແລະ ພື້ນທີ່ທີ່ມີຄວາມຕ້ອງການຫຼາຍທີ່ສຸດ. ໃນຂະນະທີ່ພວກເຮົາຮັບຟັງຊຸມຊົນ, ພວກເຮົາຕ້ອງຮັບຜິດຊອບຕໍ່ການຕອບກັບຂໍ້ສະເໜີ ເພື່ອແກ້ໄຂນະໂຍບາຍ, ລະບົບ ຫຼື ການປະຕິບັດທີ່ບໍ່ມີຄວາມເທົ່າທຽມ ພາຍໃນພື້ນທີ່ອິດທິພົນຂອງ Exchange.

ເປົ້າໝາຍຂອງພວກເຮົາກໍຄື ປະຊາຊົນທຸກຄົນໃນລັດວໍຊິງຕັນມີສິດເຂົ້າເຖິງໂອກາດ, ອຳນາດ ແລະ ຊັບພະຍາກອນຢ່າງສົມບູນ ແລະ ຢ່າງເທົ່າທຽມ ເພື່ອບັນລຸສັກກະຍາພາບຂອງພວກເຂົາຢ່າງສົມບູນ.

## ການເຂົ້າເຖິງພາສາ

ທຸກຄົນມີສິດໄດ້ຮັບການຊ່ວຍເຫຼືອທີ່ບໍ່ເສຍຄ່າ ແລະ ຂໍ້ມູນເປັນພາສາຂອງພວກເຂົາເອງ. ເພື່ອໂອ້ລົມກັບພະນັກງານທີ່ປາກເວົ້າສອງພາສາ ຫຼື ລ່າມແປພາສາເປັນພາສາທີ່ທ່ານຕ້ອງການ ໂດຍບໍ່ເສຍຄ່າ, ໃຫ້ໂທຫາສູນຊ່ວຍເຫຼືອລູກຄ້າຂອງພວກເຮົາທີ່ **1-855-923-4633**. ການຊ່ວຍເຫຼືອແມ່ນມີໃຫ້ຫຼາຍກວ່າ 200 ພາສາທີ່ແຕກຕ່າງກັນ. ທ່ານຍັງສາມາດຂໍໃຫ້ແປເນື້ອຫາເປັນພາສາຂອງທ່ານໂດຍບໍ່ເສຍຄ່າ ເມື່ອທ່ານສະໝັກຂໍປະກັນສຸຂະພາບຜ່ານ Washington Healthplanfinder.



washington
healthplanfinder
click. compare. covered.

wahealthplanfinder.org
1-855-WAFINDER | 1-855-923-4633